**ມິຊຊາອາທິດທີ 26 ການົດທຳມະດາປີ A**

**ວັນທີ 27 ກັນຍາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 21, 28-32**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວກັບບັນດາຫົວໜ້າສົງແລະພວກເຖົ້າຊຸນມຸນນາຍວ່າ: "ພວກເຈົ້າຄິດເຫັນແນວໃດ? ຄືບຸລຸດຜູ້ໜຶ່ງມີລູກຊາຍສອງຄົນ. ລາວເວົ້າກັບລູກຜູ້ກົກວ່າ: "ລູກເອີຍມື້ນີ້ໃຫ້ລູກໄປທຳງານໃນສວນອະງຸ່ນເນີ້." ລູກຊາຍຕອບວ່າ: "ບໍ່ ລູກບໍ່ຢາກໄປ" ແຕ່ພາຍລຸນມາຮູ້ສຶກກິນແໜງເຂົາເລີຍໄປ. ພໍ່ກໍເວົ້ານຳລູກຜູ້ທີສອງຢ່າງດຽວກັນ, ລູກຕອບພໍ່ວ່າ: "ໂດຍ!" ລູກຈະໄປແຕ່ເຂົາບໍ່ໄດ້ໄປ.ໃນລູກສອງຄົນນີ້ຜູ້ໃດໄດ້ທຳຕາມນ້ຳໃຈພໍ່ຂອງເຂົາ?" ພວກເຂົາຕອບວ່າ: "ແມ່ນລູກຜູ້ທີໜຶ່ງ". ພຣະເຢຊູເຈົ້າຈຶ່ງກ່າວວ່າ: "ເຮົາກ່າວແກ່ພວກເຈົ້າເປັນຄວາມຈິງວ່າ: ພວກເກັບສ່ວຍແລະພວກຍິງໂສເພນີຈະເຂົ້າອານາຈັກສະຫວັນກ່ອນພວກເຈົ້າ. ດ້ວຍວ່າທ່ານຢວງມາຫາພວກເຈົ້າໃນທາງແຫ່ງຄວາມຊອບທຳແລະພວກເຈົ້າກໍບໍ່ໄດ້ເຊື່ອຟັງເພິ່ນ. ສ່ວນພວກເກັບສ່ວຍແລະຍິງໂສເພນີ, ພວກເຂົາໄດ້ເຊື່ອຟັງເພິ່ນ. ແລະໃນທີ່ສຸດ, ເຖິງວ່າພວກເຈົ້າໄດ້ເຫັນຕົວຢ່າງນີ້ແລ້ວກໍຍັງບໍ່ໄດ້ເປັນທຸກກັບໃຈມາເຊື່ອຟັງເພິ່ນເລີຍ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 21, 28-32**

ວາຈາພຣະເຈົ້າໃນບົດອ່ານທັງສາມບົດທີ່ພວກເຮົາໄດ້ຟັງວັນນີ້ລ້ວນແຕ່ກ່າວເຖິງການຜັນປ່ຽນຊີວິດ, ການກັບຈິດປ່ຽນໃຈ.

ໃນບົດອ່ານທີໜຶ່ງຈາກໜັງສືຂອງປະພາສົກເອເຊກີແອນ ພຣະເຢຊູເຈົ້າກ່າວກັບປະຊາກອນອິສຣາແອນຂອງພຣະອົງວ່າ: "ຖ້າຫາກຄົນຊົ່ວປະຄວາມຊົ່ວຂອງຕົນກັບມາປະຕິບັດຕາມຄວາມຊື່ກົງແລະຄວາມທ່ຽງທຳແລ້ວເຂົາກໍຈະໄດ້ຊ່ວຍຊີວິດໃຫ້ຣອດ". ຍ້ອນພຣະເຈົ້າບໍ່ແມ່ນຜູ້ທີ່ມັກລົງໂທດ, ແຕ່ພຣະອົງຊົງເປັນຜູ້ມີຄວາມຮັກເມດຕາ. ພຣະອົງບໍ່ປາດຖະໜາໃຫ້ຄົນບາບຕາຍ.

ໃນບົດອ່ານທີສອງຈາກຈົດໝາຍຂອງນັກບຸນເປົາໂລເຖິງຊາວຟີລິບ. ນັກບຸນເປົາໂລຕັກເຕືອນຊາວຟີລິບໃຫ້ຜັນປ່ຽນຊີວິດຈາກສິ່ງທີ່ພວກເຂົາເຄີຍປະຕິບັດຄືການແຂ່ງດີກັນ, ການໂອ້ອວດ, ການຜິດຖຽງກັນໃຫ້ມາເປັນຜູ້ມີຄວາມຮັກອ່ອນຫວານ, ສາມັກຄີເປັນນໍ້າໜຶ່ງໃຈດຽວກັນ. ໃຫ້ຖືຜູ້ອື່ນດີກວ່າຕົນສະເໝີ ແລະເປັນຄົນບໍ່ຄິດຫາແຕ່ຜົນປະໂຫຍດສຳລັບຕົວເອງ. ດັ່ງພຣະເຢຊູກຣິສໂຕເຖິງວ່າພຣະອົງຈະເປັນພຣະເປັນເຈົ້າກໍຕາມ ແຕ່ພຣະອົງກໍສະລະທຸກສິ່ງຢ່າງເພື່ອຮັບເອົາສະພາບເປັນຂ້ອຍທາດແລະກາຍເປັນມະນຸດເໝືອນກັບພວກເຮົາເພື່ອຕາຍແທນພວກເຮົາເທິງໄມ້ກາງເຂນ.

ສ່ວນໃນພຣະວໍລະສານວັນນີ້, ພຣະເຢຊູເຈົ້າກໍໃຊ້ຄວາມປຽບທຽບເລື່ອງບຸລຸດຜູ້ໜຶ່ງມີລູກຊາຍສອງຄົນເພື່ອບອກສອນບັນດາຫົວໜ້າສົງແລະພວກເຖົ້າຊຸນມຸນນາຍທີ່ຖືວ່າຕົນເປັນຜູ້ຮູ້ຈັກພຣະທຳບັນຍັດຢ່າງດີ, ຕົນເປັນຜູ້ດີບໍລິບູນແລະບໍ່ຜັນປ່ຽນຊີວິດການກະທຳຂອງຕົນ. ໃນຄວາມປຽບທຽບນີ້ລູກຜູ້ກົກໄດ້ປະຕິເສດຄຳຮ້ອງຂໍຂອງພໍ່ຂອງເຂົາໃຫ້ໄປທຳງານໃນສວນອະງຸ່ນ, ແຕ່ຕໍ່ມາລູກຜູ້ນີ້ໄດ້ກິນແໜງໃຈແລະກັບມາປະຕິບັດສິ່ງທີ່ພໍ່ເຂົາຮ້ອງຂໍ. ສ່ວນລູກຜູ້ທີສອງໄດ້ຕອບຮັບຄຳຮ້ອງຂໍຂອງພໍ່ ແຕ່ແລ້ວເຂົາກໍບໍ່ປະຕິບັດ. ພຣະເຢຊູເຈົ້າໃຊ້ຮູບພາບຂອງລູກຜູ້ທີສອງນີ້ເພື່ອກ່າວເຖິງຜູ້ທີ່ຮູ້ຈັກພຣະທຳບັນຍັດ, ຮູ້ຈັກນໍ້າພຣະໄທຂອງພຣະເຈົ້າແຕ່ເຂົາບໍ່ປະຕິບັດຕາມ. ສ່ວນລູກຜູ້ທີໜຶ່ງຄືຜູ້ທີ່ໄດ້ໃຊ້ຊີວິດໃນທາງທີ່ຜິດເຊັ່ນ: ບັນດາຜູ້ເກັບສ່ວຍແລະຍິງໂສເພນີ, ແຕ່ແລ້ວພວກເຂົາກໍມີຄວາມກິນແໜງໃຈ, ຜັນປ່ຽນຊີວິດຂອງຕົນແລະໄດ້ເຂົ້າໃນອານາຈັກຂອງພຣະເຈົ້າ.

ເມື່ອຟັງຄວາມປຽບທຽບນີ້ຂອງພຣະເຢຊູເຈົ້າແລ້ວ, ພວກເຮົາມີຄວາມຮູ້ສຶກແນວໃດ? ພວກເຮົາເປັນຄືລູກຊາຍກົກຫລືລູກຊາຍຜູ້ທີສອງ? ພວກເຮົາໄດ້ຜັນປ່ຽນຊີວິດຈາກການເປັນຜູ້ມີຈິດໃຈແຂງກະດ້າງແລະບໍ່ຟັງຄວາມມາເປັນຜູ້ມີຈິດໃຈນົບນອບຟັງຄວາມຄືລູກຊາຍຜູ້ກົກບໍ? ຫລືພວກເຮົາໄດ້ຜັນປ່ຽນຈາກຄົນທີ່ນົບນອບເຊື່ອຟັງພຣະເຈົ້າມາເປັນຄົນທີ່ບໍ່ປະຕິບັດຕາມຄຳສັ່ງສອນຂອງພຣະອົງຄືລູກຊາຍຜູ້ທີສອງບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດປະທານພຣະຄຸນແຫ່ງການກັບໃຈແກ່ລູກ. ເພື່ອລູກຈະໄດ້ຕື່ນຕົວແລະຜັນປ່ຽນຊີວິດການກະທຳບໍ່ດີຂອງລູກເພື່ອຫັນມາຫາເສັ້ນທາງແຫ່ງຄວາມຊື່ກົງຂອງພຣະອົງ. ເພື່ອລູກຈະໄດ້ຮັບຄວາມເມດຕາແລະການໃຫ້ອະໄພຈາກພຣະອົງ, ເໝືອນກັບຄົນເກັບສ່ວຍແລະຍິງໂສເພນີທີ່ໄດ້ຮັບອານາຈັກສະຫວັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ